ຂັ້ນຕອນການລ້ຽງໄກ່ລາດ

23

1 ຄັດເລືອກສະຖານທີ່ ແລະ ການປຸກສ້າງຄອກ

- ເປັນບ່ອນຫ່າງໄກຊຸມຊົນເລັກນ້ອຍ, ອາດເປັນເຖິນສວນ, ໄຮ່, ນາ.
- ຄວນປຸກຕົ້ນໄມ້ເປັນພຸ່ມ, ໄມ້ໃຫ້ໝາກ ເພື່ອປ້ອງກັນ ຕາກແດດ ແລະ ເຮັດໃຫ້ດິນຊຸ່ມຊື່ນ, ເປັນແຫຼ່ງ ຜະລິດອາຫານທຳມະຊາດ (ມີດ, ປອກ, ຂີ້ກະເດືອນ, ຕັກແຕນ ແລະ ແມງໄມ້ອື່ນໆ)
- ມີຮົ້ວກະແຊະອ້ອມຮອບຈະເປັນການດີ ແລະ ຄວນມີເຖິ່ນຫຍ້າໃຫ້ໄກ່ໄດ້ຫາກິນ. ຕາມເຖິ່ນຂ້າງຄອກ ຄວນມີອາຫານ, ຮາງນ້ຳໄວ້ສຳລັບໃຫ້ສັດກິນ.

ໄກ່ລາດຕ້ອງການສະຖານທີ່ເປັນເຖິ່ນ ເພື່ອຄັດເຍ່ຍຊອກອາຫານທຳມະຊາດ ສະນັ້ນ ຄວນມີພື້ນທີ່ເປັນເຖິ່ນກ້ວ້ຳແຕ່ເລັກນ້ອຍ ແລະ ຄວນເຮັດຮົ້ວກະແຊະອ້ອມຮອບບໍລິເວນດັ່ງກ່າວ ໃນເນື້ອທີ່ກ້ວ້ຳ ປະມານ 800 ຕາແມັດ ຫຼື ມີເນື້ອທີ່ກ້ວ້ຳຫຼາຍກໍ່ຊຸ່ມຊື່ນເຖິ່ນສວນ ແລະ ຍິ່ງດີ.

ຕາມເຖິ່ນຄວນໃຫ້ປຸກຕົ້ນໄມ້ໃຫ້ໝາກເພື່ອເປັນຮົ່ມເງົ້າເປັນບ່ອນຄວັດເຍ່ຍຫາກິນອາຫານຕາມທຳມະຊາດ ຫຼື ມີບ່ອນລ້ຽງປອກ ແລະ ລ້ຽງຂີ້ກະເດືອນຍິ່ງເຫຼືອການດີ.

ຄອກໄກ່ແບບບໍ່ຍົກພື້ນ

ຄອກໄກ່ແບບຍົກພື້ນ

2 ແມ່ພັນ ແລະ ການຄັດເລືອກພັນໄກ່ລາດ

ແມ່ພັນໄກ່ລາດນິຍົມລ້ຽງ 5 ຊະນິດ: ໄກ່ອຸ, ໄກ່ໂຍກ, ໄກ່ຫອນຈຸ, ໄກ່ດຸກດຳ ແລະ ໄກ່ແຈ້.

ໄກ່ອຸ

ໄກ່ໂຍກ

ໄກ່ດຸກດຳ



ໄກ່ຫອນຈຸ

ໄກ່ແຈ້

ແມ່ພັນໄກ່ລາດ

ການຄັດເລືອກເປັນແມ່ພັນ:

- ຮຸ່ນຮ່າງໃຫຍ່ສົມສ່ວນ, ວ່ອງໄວ, ຕາໃສ, ແຂງແຮງ, ມີນ້ຳໜັກດີ, ສີຂົນເຫລື້ອມງາມ ອາຍຸ 6-7 ເດືອນ ຂຶ້ນໄປ.
- ເບິ່ງການໃຫ້ໄຂ່ ແລະ ການລ້ຽງດູກໍ່ດີ, ບໍ່ຈີກຄອກ ແລະ ເບິ່ງເຫັນລ້ຽງດູກລອດສູງ
- ເບິ່ງເຊື້ອສາຍເລືອດກຽວກັນ (ແມ່, ເອື້ອຍນ້ອງກຽວກັນ)
- ເມື່ອອຸໄດ້ 3 ປີຄວນຄັດຄອກ.

ການຈັດການປ່ຽນແມ່ພັນ:

ອັດຕາການປ່ຽນແມ່ພັນ, ໄກ່ຜູ້ 1 ໂຕຕໍ່ໄກ່ແມ່ 5-6 ໂຕ ແມ່ນເໝາະສົມ ແຕ່ໂດຍທົ່ວໄປແລ້ວການລ້ຽງໄກ່ ຂອງຊາວກະສິກອນຍັງມີອັດຕາໄກ່ຜູ້ຫຼາຍກວ່າ ຊຶ່ງໝາຍຄວາມວ່າຊາວກະສິກອນລ້ຽງໄກ່ຜູ້ ໃນລະດັບອັດຕາ ສ່ວນທີ່ເກີນຄວນຈຳເປັນ ເຮັດໃຫ້ຜູ້ໄກ່ມີການຂະຫຍາຍໂຕຊ້າ ແລະ ຂຶ້ນປີຢອາຫານ.

ແຜນການລ້ຽງ ແລະ ການຄັດເລືອກແມ່ພັນໄກ່

ການໄຂ່ ແລະ ການຟັກໄຂ່:

- ໄກ່ລາດແມ່ໜຶ່ງຈະສາມາດໃຫ້ໄຂ່ປະມານ 12-14 ໜ່ວຍຕໍ່ຄັ້ງ ແລະ ໃຊ້ເວລາຟັກໄຂ່ 21 ວັນ. ໄກ່ແມ່ ບາງໂຕຈະລ້ຽງດູກ 2-3 ເທື່ອປະໄຂ່ອີກຊຸດໃໝ່, ໃນ 1 ປີຈະໄຂ່ 3-4 ຄັ້ງ ຫຼື ປະມານ 50-70 ໜ່ວຍຕໍ່ ປີ.

ການລະມຸນງານ ແລະ ການລ້ຽງໄກ່ນ້ອຍ:

- ການເຮັດຄອກໄກ່ນ້ອຍນັ້ນແມ່ນມີຫຼາຍວິທີ, ຫຼາຍຮູບຫຼາຍແບບ ເຮັດແນວໃດກໍ່ໄດ້ ແຕ່ສຳຄັນໄກ່ນ້ອຍ ມີຄວນອົບອຸ່ນຄືກັນກັບຢູ່ນຳແມ່ຂອງມັນ ບ່ອນທີ່ມີໄຟຟ້າກໍ່ໃຊ້ຄອກໄຟ.
- ຖ້ຳບ່ອນທີ່ບໍ່ມີໄຟຟ້າກໍ່ຄວນໃຊ້ເຊັ່ນ: ເກີຫງ່ຳນຮອງພື້ນຄອກຕ້ອງໃສ່ຂີ້ແກບ, ຂີ້ເລື່ອຍ, ເພື່ອຮັກສາຄວາມ ຕັດເປັນທ່ອນນ້ອຍໆ. ອ້ອມດ້ວຍຜ້າຫຍຸ້ມໃຫ້ລົມພັດເຂົ້າໄປຂ້າງໃນ ຫລື ເອົາເກົ້າຫ່ານໄປວາງໄວ້ຫຍັ່ງ ກາງແຕ່ຕ້ອງເອົາສິ່ງກະສິດ້ອນດ້ານນອກໄວ້.
- ຕ້ອງໝັ່ນ ແລະ ຮູ້ສຶ່ງເກດລະດັບຄວາມອົບອຸ່ນພາຍ ໃນຄອກ ອານຸບານໄກ່ນ້ອຍສະໝີ ເພື່ອຈະໄດ້ແກ້ ໄຂທັນຫວງການ.
- ອັດຕາການປ່ອຍໄກ່ແມ່ນຂຶ້ນກັບຄວາມເໝາະສົມຂອງຄອກ ແລະ ການຈັດການທີ່ດີອາຫານພຽງພໍ່ ສາມາດປ່ອຍໄກ່ໄດ້ຫຼາຍໂຕ.

ອາຍຸໄກ່ (ອາທິດ)	ອັດຕາການບັນຈຸ (ໄກ່/ຕາແມັດ)
1-6	30-50
7-12	20-25
13-16	10-15
17-26	6-7
ໄກ່ໄຂ່ແມ່ພັນ	3-4

3 ອາຫານ ແລະ ການໃຫ້ອາຫານ

- ອາຫານສຳເລັດຮູບ
- ການໃຫ້ອາຫານທີ່ມີຄຸນຄ່າສູງຈະສາມາດເຮັດໃຫ້ນ້ອຍແຂງແຮງ ແລະ ໃຫຍ່ໄວ, ອາຫານທີ່ມີລາຄາຖືກ ສາມາດຜະລິດຕົ້ນທຶນການຜະລິດ ແລະ ຫາໄດ້ໃນບ້ານເຮົາມີດັ່ງນີ້: ສາລີປົ້ກ, ເຂົ້າປຽນ, ຮຳ, ເຂົ້າປົ້ວ, ມັນຕົ້ນ, ຖົ່ວສະໂກໂລ, ຜັກຜິດ.
- ອາຫານທຳມະຊາດເຊັ່ນຜັກຜິດ, ແມງໄມ້, ປອກ, ຂີ້ກະເດືອນ,...ດ້ວຍຕົນເອງ ຕາມຂອບເຂດບໍລິເວນ ຄອກ ຫຼື ຕາມປ່າໃກ້ບ້ານ.
- ໄກ່ນ້ອຍອານຸບານ 1-6 ອາທິດ ຈະໃຫ້ກິນຕາມໃຈ (ປະມານ 20 ກຼາມ/ວັນ), ມື້ໜຶ່ງຄວນໃຫ້ຫຼາຍເທື່ອ 5-6 ຕໍ່ມື້.
- ໄກ່ລາດອາຍຸ 13-16 ອາທິດ ໃຫ້ກິນປະມານ 40-50 ກຼາມ/ມື້ໂຕ.
- ໄກ່ຄຸ້ນ ແລະ ໄກ່ສາວໃຫ້ກິນປະມານ 60-70 ກຼາມ/ມື້ໂຕ ແລະ ໄກ່ລາດພໍ່ແມ່ພັນຈະໃຫ້ກິນປະມານ 80-90 ກຼາມ/ມື້ໂຕ.

ຕົວຢ່ຳໆ 1: ການປະສົມອາຫານໃຫ້ໄກ່ລາດ (ອາຍຸ 17-26 ອາທິດ) 100 ກລ

- ຫຍ້າສົດ (ຮູ້ຊີ/ໝປຍ) 10 ກລ
- ສາລີປົ້ກ/ເຂົ້າປຽນ 42 ກລ
- ຫົວມັນຕົ້ມບົດ 20 ກລ
- ຮຳ 28 ກລ

ຕົວຢ່ຳໆ 2: ການປະສົມອາຫານໃຫ້ໄກ່ລາດ (ໄກ່ພໍ່ແມ່ພັນ) 100 ກລ

- ຫຍ້າສົດ (ຮູ້ຊີ/ໝປຍ) 15 ກລ
- ສາລີປົ້ກ/ເຂົ້າປຽນ 40 ກລ
- ຫົວມັນຕົ້ມບົດ 20 ກລ
- ຮຳ 25 ກລ

4 ພະຍາດ, ການປ້ອງກັນ ແລະ ການຮັກສາສຸຂະພາບ

ພະຍາດ:

- ໄກ່ລາດມີ 2 ພະຍາດທີ່ຮ້າຍແຮງທີ່ສຸດ ໄດ້ແກ່ພະຍາດນິວຄາເຊິ່ນ ແລະ ພະຍາດອະຫິວສັດປີກ.

ການປ້ອງກັນພະຍາດ:

- ຄອກໄກ່ຕ້ອງສະອາດ ອາກາດໂລ່ງດີ, ມີຄວາມອົບອຸ່ນໃນຄວາມອາກາດໜາວເຢັນ ແລະ ສາມາດ ປ້ອງ ກັນຝົນໄດ້.
- ກິນອາຫານພຽງພໍ ແລະ ມີຄຸນນະພາບ, ມີນ້ຳສະອາດໃຫ້ກິນບໍ່ຂາດ.
- ກ່ອນຈະນຳໄກ່ເຂົ້າມາລ້ຽງຕ້ອງໄດ້ລ້າງພື້ນຄອກໃຫ້ສະອາດ, ປະໄວ້ໃຫ້ແຫ້ງແລ້ວຂ້ຳເຊື້ອດ້ວຍປຸນຂາວ ໃນອັດຕາສ່ວນ 20 ກິໂລ/100 ຕາແມັດ.
- ຖ້ຳນຳເອົາໄກ່ຈາກປ່ອນອື່ນເຂົ້າມາລ້ຽງ ຕ້ອງແຍກຂ້ຽ ເພື່ອຕິດຕາມເບິ່ງອາຫານສາກ່ອນ 2 ອາທິດ.
- ບໍ່ຊື້ໄກ່ຈາກປ່ອນອື່ນ ຫຼື ຕະຫລາດມາໃສ່ໃນກົ່ວເຮືອນ.
- ບໍ່ຂີ້ ຫຼື ຂາຍ ສັດເຫງົ້າ ຫຼື ສິ່ງໃສ່ເປັນພະຍາດ, ເວລາມີສັດຕາຍຄວນເຜົ່າ ຫຼື ຝັງ.
- ຕ້ອງສັກຢາວັກຊີນຊະນິດຕ່ຳໆ ເພື່ອປ້ອງກັນ.

NAFRI DTFAD IFAD Investing in rural people

ໂຄງການກະສິກຳ ເພື່ອໂພຊະນາການ

ບ້ານໂພນໄຮ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ລ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ: www.afn.gov.la